# ບົດສະເໜີ

# ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030)

**ນຳສະເໜີໂດຍ: ທ່ານ ນ. ປານີ ອໍລະຈິດ**

**ກົມແຜນການ, ກະຊວງແຜນການ ແລະ ການລົງທຶນ**

**ກອງປະຊຸມປຶກສາຫາລື ກ່ຽວກັບການສ້າງຍຸດທະສາດການຮ່ວມມື ລະຫວ່າງ ສປປ ລາວ ແລະ ອົງການ IFAD (2026-2031)**

**9 ມິຖຸນາ 2025**

# ເນື້ອໃນບົດນຳສະເໜີ

1. ບ່ອນອີງ
2. ຂະບວນການສ້າງແຜນການ 5 ປີ ຄັ້ງທີ X (2026-2030)
3. ໂຄງຮ່າງ ແລະ ເນື້ອໃນຕົ້ນຕໍຂອງ ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030)
   - ພາກທີ 1: ການສະຫຼຸບຕີລາຄາແຜນການ 5 ປີ ຄັ້ງທີ IX (2021-2025)
   - ພາກທີ 2: ທິດທາງແຜນການ 5 ປີ ຄັ້ງທີ X (2026-2030)
   - ພາກທີ 3: ມາດຕະການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ X (2026-2030)

# ບ່ອນອີງ

1. **ມະຕິຂອງກົມການເມືອງສູນກາງພັກ, ສະບັບເລກທີ 27/ກມສພ, ລົງວັນທີ 29 ພະຈິກ 2023**
   ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມ ແລະ ອະນຸກຳມະການຕ່າງໆ ເພື່ອກະກຽມກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ.
2. **ຂໍ້ຕົກລົງ ຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 56/ນຍ, ລົງວັນທີ 24 ເມສາ 2023**
   ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການສະຫຼຸບກາງສະໄໝ, ສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະ ສ້າງແຜນການ 5 ປີ ຄັ້ງທີ X (2026-2030).
3. **ຄຳແນະນຳ ຂອງທ່ານລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 3545/ກຜທ ແລະ ສະບັບເລກທີ 3546/ກຜທ, ລົງວັນທີ 25 ທັນວາ 2023**
   ກ່ຽວກັບການສ້າງແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ 5 ປີຕໍ່ໜ້າ ສຳລັບຂະແໜງການ, ອົງການ, ຂັ້ນແຂວງ, ນະຄອນຫຼວງວຽງຈັນ, ນະຄອນ ແລະ ຂັ້ນເມືອງ ແລະ ຂອງຂັ້ນບ້ານ.
4. **ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024**
   ວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່.

# ຂະບວນການສ້າງແຜນການ 5 ປີ ຄັ້ງທີ IX (2026-2030)

1 ເລີ່ມມາແຕ່ຕົ້ນປີ 2023 ໂດຍເລີ່ມຈາກທ່ານນາຍົກລັດຖະ ມົນຕີອອກຂໍ້ຕົກລົງ ສະບັບເລກທີ 56/ນຍ

2 ລັດຖະມົນຕີກະຊວງ ຜທ ອອກຄຳແນະນຳ ສະບັບເລກທີ 3545/ກຜທ ແລະ ສະບັບເລກທີ 3546/ກຜທ, ລົງວັນທີ 25 ທັນວາ 2023

3 **ຄົ້ນຄ້ວາຮ່າງຂອບແນວຄວາມຄິດ ແລະ ຮ່າງຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X** ຂຶ້ນ (ອີງໃສ່ສະຫຼຸບກາງສະໄໝແຜນ 9, ສະພາບແວດລ້ອມພາກພື້ນ, ສາກົນ ແລະ ຈຸດພິເສດ, ທ່າແຮງຂອງປະເທດ)

4 **ນຳເອົາຮ່າງແຜນການ 5 ປີ ຄັ້ງທີ X ປຶກສາຫາລື**ກັບຂະແໜງການ ແລະ ທ້ອງຖິ່ນລະດັບວິຊາການ ແລະ ລະດັບສູງ, ກັບຄູ່ຮ່ວມພັດທະນາ ແລະ ພາກເອກະຊົນ

5 ຮ່າງແຜນໄປຂໍຄຳເຫັນ ກອງປະຊຸມຄົບຄະນະ ຄັ້ງທີ 9 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ໃນທ້າຍເດືອນຕຸລາ 2024

6 ຮ່າງແຜນໄປຂໍຄຳເຫັນ ກອງປະຊຸມລັດຖະບານ, ກອງປະຊຸມກົມການເມືອງ ແລະ ກອງປະຊຸມຄົບຄະນະ ຄັ້ງທີ 10 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ໃນເດືອນພຶດສະພາ 2025

# ໂຄງຮ່າງ ແລະ ເນື້ອໃນຕົ້ນຕໍ
# ຂອງ ຮ່າງແຜນພັດທະນາເສດຖະກິດ-
# ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X
# (2026-2030)

# ພາກທີ 1:
# ການສະຫຼຸບຕີລາຄາແຜນການ 5 ປີ ຄັ້ງທີ IX (2021-2025)

# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)

**ປະກອບດ້ວຍ: 6 ເປົ້າໝາຍ ແລະ 25 ວຽກຈຸດສຸມບູລິມະສິດ**

- ມີຂອບຕິດຕາມ ແລະ ປະເມີນຜົນ (M & E framework)
- ໄດ້ເຊື່ອມສານ ປພຍ (SDGs), ມາດຖານຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ LDC ແລະ ຍຸດທະສາດເພື່ອການເຕີບໂຕສີຂຽວ.

# ສະພາບແວດລ້ອມສາກົນ, ພາກພື້ນ ແລະ ພາຍໃນ

**ສະພາບພາຍນອກ**

- ຜົນກະທົບຈາກການລະບາດໂຄວິດ-19
- ຄວາມຂັດແຍ້ງທາງດ້ານການເມືອງ, ພູມີສາດ, ການຄ້າຢູ່ບາງຂົງເຂດ
- ຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ອື່ນໆ

(ເຮັດໃຫ້ເສດຖະກິດຫຼຸດລົງ, ລາຄາພະລັງງານ, ອັດຕາເງິນເຟີ້ທົ່ວໂລກ ເພີ່ມຂຶ້ນ)

**ສະພາບພາຍໃນ**

- ຄວາມຫຍຸ້ງຍາກເສດຖະກິດ-ການເງິນ
- ຜົນກະທົບຈາກການລະບາດໂຄວິດ-19
- ໄພທຳມະຊາດ

# ເປົ້າໝາຍ 1: ການຂະຫຍາຍຕົວຂອງເສດຖະກິດ

## ຜົນໄດ້ຮັບທີ່ສຳຄັນ

- GDP ຂະຫຍາຍຕົວ 4,24% (ແຜນການ 5 ປີສະເລ່ຍ 4,0%)
- ການຜະລິດກະສິກຳ, ອຸດສາຫະກຳປຸງແຕ່ງ ແລະ ການຜະລິດແຮ່ທາດ ເພື່ອທົດແທນການນຳເຂົ້າ ແລະ ສົ່ງອອກໄດ້ຂະຫຍາຍຕົວດີພໍສົມຄວນ
- ໄດ້ປັບປຸງກົນໄກ, ລະບຽບການ ເພື່ອຄຸ້ມຄອງລາຍຮັບໃຫ້ມີປະສິດທິພາບ (ຂະຫຍາຍຖານອາກອນ ແລະ ປັບປຸງກົນໄກການເກັບພາສີຕາມດ່ານສາກົນ, ຂາດດຸນງົບປະມານມີທ່າອ່ຽງຫຼຸດລົງ....)
- ສ້າງຄວາມເຂັ້ມແຂງການຄຸ້ມຄອງເງິນຕາດ້ວຍມາດຕະການຕ່າງໆ

## ສິ່ງທ້າທາຍຕົ້ນຕໍ

- ຄຸນນະພາບການເຕີບໂຕຍັງບໍ່ທັນສູງ
- ການຜະລິດເປັນສິນຄ້າຍັງບໍ່ທັນຫຼາກຫຼາຍ ແລະ ຄຸນນະພາບບໍ່ສູງ
- ອັດຕາເງິນເຟີ້ຢູ່ໃນລະດັບສູງ
- ເງິນກີບອ່ອນຄ່າ

| ປີ | GDP (%) | GDP/ຫົວຄົນ | GNI |
|---|---|---|---|
| 2021 | 3.5% | 2,595 | 2,452 |
| 2022 | 4.4% | 2,022 | 1,901 |
| 2023 | 4.2% | 1,880 | 1,737 |
| 2024 | 4.3% | 1,996 | 1,871 |
| 2025 | 4.8% | 2,085 | 1,956 |

# ເປົ້າໝາຍ 1: ການຂະຫຍາຍຕົວຂອງເສດຖະກິດ

## ຜົນໄດ້ຮັບທີ່ສຳຄັນ

- GDP ຂະຫຍາຍຕົວ 4,24% (ແຜນການ 5 ປີສະເລ່ຍ 4,0%)
- ການຜະລິດກະສິກຳ, ອຸດສາຫະກຳປຸງແຕ່ງ ແລະ ການຜະລິດແຮ່ທາດ ເພື່ອທົດແທນການນຳເຂົ້າ ແລະ ສົ່ງອອກໄດ້ຂະຫຍາຍຕົວດີພໍສົມຄວນ
- ໄດ້ປັບປຸງກົນໄກ, ລະບຽບການ ເພື່ອຄຸ້ມຄອງລາຍຮັບໃຫ້ມີປະສິດທິພາບ (ຂະຫຍາຍຖານອາກອນ ແລະ ປັບປຸງກົນໄກການເກັບພາສີຕາມດ່ານສາກົນ, ຂາດດຸນງົບປະມານມີທ່າອ່ຽງຫຼຸດລົງ....)
- ສ້າງຄວາມເຂັ້ມແຂງການຄຸ້ມຄອງເງິນຕາດ້ວຍມາດຕະການຕ່າງໆ

## ສິ່ງທ້າທາຍຕົ້ນຕໍ

- ຄຸນນະພາບການເຕີບໂຕຍັງບໍ່ທັນສູງ
- ການຜະລິດເປັນສິນຄ້າຍັງບໍ່ທັນຫຼາກຫຼາຍ ແລະ ຄຸນນະພາບບໍ່ສູງ
- ອັດຕາເງິນເຟີ້ຢູ່ໃນລະດັບສູງ
- ເງິນກີບອ່ອນຄ່າ

| | ປະຕິບັດ | ແຜນການ | ຄາດຄະເນ |
|---|---|---|---|
| GDP | 4.24% | 4.% | ຄາດວ່າຈະບັນລຸແຜນ |
| ກະສິກຳ | 3.06 | 2.50 | ຄາດວ່າຈະບັນລຸແຜນ |
| ອຸດສາຫະກຳ | 4.52 | 4.10 | ຄາດວ່າຈະບັນລຸແຜນ |
| ບໍລິການ | 4.52 | 6.00 | ຄາດວ່າຈະບໍ່ບັນລຸແຜນ |
| ພາສີ-ອາກອນ | 3.84 | 5.80% | ຄາດວ່າຈະບໍ່ບັນລຸແຜນ |
| ການຜະລິດພືດເປັນສິນຄ້າ (ລ້ານໂຕນ) | 8.70 | 7.4 | ບັນລຸແຜນ |
| ລາຍຮັບງົບປະມານ (ຕື້ກີບ) | 235,469 | 179,500 | ບັນລຸແຜນ |
| ອັດຕາແລກປ່ຽນແຕ່ລະປີທຽບໃສ່ເງິນໂດລາສະຫະລັດ | ເກີນຂອບກຳນົດ | ±5 | ຄາດວ່າຈະບໍ່ບັນລຸແຜນ |
| ອັດຕາເງິນເຟີ້ (%) | 17 | ≤ 6 | ຄາດວ່າຈະບໍ່ບັນລຸແຜນ |

# ເປົ້າໝາຍ 2: ການພັດທະນາຊັບພະຍາກອນມະນຸດ

## ຜົນໄດ້ຮັບທີ່ສຳຄັນ

- ອັດຕາການຈົບຊັ້ນປະຖົມສຶກສາເພີ່ມຂຶ້ນ
- ອັດຕາການຕາຍຂອງແມ່ ແລະ ເດັກ ຫຼຸດລົງ
- ຂະຫຍາຍອັດຕາການຊົມໃຊ້ວິດຖ່າຍ
- ການຝຶກອົບຮົມວິຊາຊີບຂອງໄວໜຸ່ມ

## ສິ່ງທ້າທາຍຕົ້ນຕໍ

- ການປະລະການຮຽນຂອງນັກຮຽນຊັ້ນປະຖົມ ແລະມັດທະຍົມຕົ້ນ, ຂາດແຄນຄູຢູ່ບາງທ້ອງຖິ່ນ
- ບັນຫາດ້ານໂພຊະນາການ ແມ່ນມີຄວາມທ້າທາຍ
- ການເຂົ້າເຖິງບໍລິການດ້ານສາທາລະນະສຸກຢູ່ເຂດຫ່າງໄກສອກຫຼີກ
- ການຄຸ້ມຄອງແຮງງານ (ແຮງງານຈຳນວນໜຶ່ງໄປເຮັດວຽກຢູ່ຕ່າງປະເທດ)

| | ປະຕິບັດ | ແຜນການ | ຄາດຄະເນ |
|---|---|---|---|
| ອັດຕາເຂົ້າຮຽນໃຫມ່ລວມ ປ.5 | 84.7 | 97 | ສ່ຽງຈະບໍ່ບັນລຸ |
| ອັດຕາຈົບຊັ້ນປະຖົມ | 93 | 94 | ຈະບໍ່ບັນລຸ |
| ອັດຕາການເລື່ອນຊັ້ນ ປ.5 ຂຶ້ນ ມ.1 | 85.6 | 85 | ຈະສາມາດບັນລຸ |
| ອັດຕາປະລະຂອງນັກຮຽນຊັ້ນປະຖົມ | 4.6 | 4 | ສ່ຽງຈະບໍ່ບັນລຸ |
| ອັດຕາເຂົ້າຮຽນໃຫມ່ລວມ ມ.4 | 61.4 | 68 | ສ່ຽງຈະບໍ່ບັນລຸ |
| ອັດຕາປະລະການຮຽນຂອງນັກຮຽນ ຊັ້ນມັດທະຍົມຕອນຕົ້ນ | 12.4 | 8 | ສ່ຽງຈະບໍ່ບັນລຸ |
| ປະຊາກອນຫນຸ່ມ ແລະ ຜູ້ປະລະການຮຽນ ໃຫ້ໄດ້ບຳລຸງ ຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ | 176,720 | 150,000 | ຈະສາມາດບັນລຸ |
| ນັກຮຽນທີ່ຈົບຊັ້ນມັດທະຍົມຕອນຕົ້ນ ໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບທຽບໃສ່ຈຳນວນນັກຮຽນທີ່ມັດທະຍົມຕອນຕົ້ນພາຍໃນ ປີ 2025 | 5.7 | 5 | ຈະສາມາດບັນລຸ |
| ອັດຕາເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳຫນັກຕ່ຳກວ່າມາດຕະຖານຂອງປະຊາກອນກຸ່ມເປົ້າຫມາຍ | 24.3 (2024) | 15 | ສ່ຽງຈະບໍບັນລຸ |
| ອັດຕາເດັກນ້ອຍລຸ່ມ 5 ປີ ທີ່ມີລວງສູງຕ່ຳກວ່າມາດຕະຖານຂອງປະຊາກອນກຸ່ມເປົ້າຫມາຍ | 32.8 (2024) | 27 | ສ່ຽງຈະບໍບັນລຸ |
| ອັດຕາການເກີດລູກມີແພດຊ່ວຍ ຂອງປະຊາກອນກຸ່ມເປົ້າໝາຍ | 85 | 85 | ສ່ຽງຈະບໍ່ບັນລຸ |
| ອັດຕາການໃຫ້ວັກຊີນກັນພະຍາດໃນເດັກ ລຸ່ມ 1 ປີ ຂອງປະຊາກອນກຸ່ມເປົ້າໝາຍ | 95 | 95 | ຈະສາມາດບັນລຸ |
| ອັດຕາຊົມໃຊ້ນ້ຳສະອາດ ຂອງປະຊາກອນທັງໝົດ | 95 | 95 | ຈະສາມາດບັນລຸ |
| ອັດຕາການຊົມໃຊ້ວິດຖ່າຍຄອບຄົວ ຂອງຄອບຄົວທັງໝົດ | 85 | 85 | ຈະສາມາດບັນລຸ |

# ເປົ້າໝາຍ 3: ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ

## ຜົນໄດ້ຮັບທີ່ສຳຄັນ

- ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍ
- ຈຳນວນຄອບຄົວ, ບ້ານ ແລະ ເມືອງທຸກຍາກຫຼຸດລົງເທື່ອລະກ້າວ
- ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ

## ສິ່ງທ້າທາຍຕົ້ນຕໍ

- ບັນຫາຄວາມທຸກຍາກຂອງປະຊາຊົນ (ຄ່າຄອງຊີບ, ລາຄາສະບຽງອາຫານ)
- ການສະໜອງໂຄງລ່າງພື້ນຖານທີ່ຈຳເປັນ ຍັງຈຳກັດ (ເຂດຫ່າງໄກສອກຫຼີກ)

**ຜົນການຈັດຕັ້ງປະຕິບັດຕົວຊີ້ບອກສຳຄັນ**

| ຕົວຊີ້ບອກ | ຫົວໜ່ວຍ | ປະຕິບັດ | ຄາດໝາຍ | ຄາດໝາຍຜົນໄດ້ຮັບ |
|---|---|---|---|---|
| ສ້າງຄອບຄົວພົ້ນທຸກ | ຄອບຄົວ | 148,816 | 204.360 | ບໍ່ສຳເລັດ |
| ສ້າງບ້ານພົ້ນທຸກ | ບ້ານ | 1,815 | 3.104 | ບໍ່ສຳເລັດ |
| ສ້າງເມືອງພົ້ນທຸກ | ເມືອງ | 52 | 69 | ບໍ່ສຳເລັດ |
| ສ້າງຄອບຄົວພັດທະນາ | ບ້ານ | 150,503 | 245,754 | ບໍ່ສຳເລັດ |
| ສ້າງບ້ານໃຫຍ່ເປັນຕົວເມືອງນ້ອຍ | ເມືອງ | 24 | 10 | ສຳເລັດ |

# ເປົ້າໝາຍ 4: ປົກປັກຮັກສາສິ່ງແວດລ້ອມ

## ຜົນໄດ້ຮັບທີ່ສໍາຄັນ

- ສໍາເລັດການສ້າງແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຮອບດ້ານ
- ສ້າງສະຖານີອຸຕຸນິຍົມ, ອຸທົກກະສາດຫຼາຍແຫ່ງ
- ການຜະລິດກະສິກໍາສະອາດ, ການນໍາໃຊ້ລົດໄຟຟ້າ, ພະລັງງານລົມ, ແສງອາທິດ
- ໄດ້ສົ່ງເສີມວຽກງານຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ (ໂຄງການຊື້-ຂາຍກາກບອນ)

## ສິ່ງທ້າທາຍຕົ້ນຕໍ

- ການອອກໃບຕາດິນ
- ການຄຸ້ມຄອງສິ່ງເສດເຫຼືອ
- ຜົນກະທົບຕໍ່ສິ່ງແວດລ້ອມ (ການບຸກລຸກປ່າ, ໂຄງການພັດທະນາສິ່ງຜົນກະທົບສິ່ງແວດລ້ອມ)

# ເປົ້າໝາຍ 5: ປັບປຸງໂຄງລ່າງພື້ນຖານ ແລະ ການຮ່ວມມື

## ຜົນໄດ້ຮັບທີ່ສຳຄັນ

- ການກໍ່ສ້າງໂຄງລ່າງພື້ນຖານຄົມມະນາຄົມມີຄວາມຄືບໜ້າດີສົມຄວນ ເປັນຕົ້ນ: ສຳເລັດການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ ລວມທັງສິ່ງອຳນວຍຄວາມສະດວກຕ່າງໆເພື່ອນຳໃຊ້ເສັ້ນທາງລົດໄຟລາວ-ຈີນ
- ສຳເລັດການກໍ່ສ້າງທ່າບົກ 3 ແຫ່ງ
- ສຸມໃສ່ການຫັນເປັນທັນສະໄໝໃນທຸກຂົງເຂດວຽກງານ

## ສິ່ງທ້າທາຍຕົ້ນຕໍ

- ການອຳນວຍຄວາມສະດວກໃຫ້ການບໍລິການຂົນສົ່ງ ຍັງມີຄວາມຊັກຊ້າ
- ການຄຸ້ມຄອງ ແລະ ບູລະນະຮັກສາເສັ້ນທາງ (ເສັ້ນທາງເປ່ເພຫຼາຍແຫ່ງ ແລະ ການຄົມມະນາຄົມມີຄວາມຫຍຸ້ງຍາກ)

# ເປົ້າໝາຍ 6: ການຄຸ້ມຄອງບໍລິຫານລັດ

## ຜົນໄດ້ຮັບທີ່ສຳຄັນ

- ປັບປຸງພາລະບົດບາດ ແລະ ກົງຈັກການຈັດຕັ້ງຂອງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ກະທັດຮັດ
- ໄດ້ທົດລອງຫັນຫົວໜ່ວຍວິຊາການທີ່ມີລາຍຮັບ ໄປສູ່ກຸ້ມຕົນເອງດ້ານງົບປະມານ 5 ຫົວໜ່ວຍ ແລະ ເພີ່ມອີກ 2 ຫົວໜ່ວຍ (ກົມພາສີ ແລະ ກົມສວຍສາອາກອນ)
- ສ້າງສູນບໍລິການປະຕູດຽວໄດ້ 32 ແຫ່ງ (ແຜນການ 58 ແຫ່ງ)

## ສິ່ງທ້າທາຍຕົ້ນຕໍ

- ກົນໄກການປະສານງານ ລະຫວ່າງພາກລັດດ້ວຍກັນ ຍັງບໍ່ທັນເຂັ້ມແຂງ
- ການອະນຸມັດການລົງທຶນຂອງພາກເອກະຊົນບາງກໍລະນີຍັງມີຫຼາຍຂັ້ນ, ຫຼາຍຂອດ ພາໃຫ້ຊັກຊ້າ
- ຄວາມຮູ້ຄວາມສາມາດຂອງບຸກຄະລາກອນຍັງຈຳກັດ
- ຖານຂໍ້ມູນຮັບໃຊ້ການພັດທະນາຍັງຈຳກັດ

# ຕົລາຄາລອມ

# ຕົລາຄາຜົນສຳເລັດທີ່ພົ້ນເດັ່ນ

1

ປະເທດຊາດສືບຕໍ່ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ.

2

ພື້ນຖານການຜະລິດ ແລະ ການບໍລິການ ໄດ້ຮັບການພັດທະນາ ແລະ ເກີດມີໜໍ່ແໜງໃໝ່ຈຳນວນໜຶ່ງ, ເສດຖະກິດສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ, ການຄຸ້ມຄອງງົບປະມານ ແລະ ເງິນຕາໄດ້ຮັບການປັບປຸງດີຂຶ້ນເປັນກ້າວໆ, ເສດຖະກິດຂອງປະເທດບໍ່ຕົກເຂົ້າສູ່ວິກິດການ.

3

ໂຄງລ່າງພື້ນຖານທີ່ສຳຄັນເພື່ອເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນ ໄດ້ຮັບການພັດທະນາ ແລະ ຍົກລະດັບ (ລົດໄຟລາວ-ຈີນ, ທາງດ່ວນວຽງຈັນ-ວັງວຽງ, ທ່າບົກ-ລະບົບໂລຈິດສຕິກ).

4

ຂົງເຂດວັດທະນະທຳ-ສັງຄົມ ໄດ້ສືບຕໍ່ພັດທະນາ ແລະ ມີຄວາມຄືບໜ້າດີຂຶ້ນກວ່າເກົ່າ, ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງທ້ອງຖິ່ນຕ່າງໆ ສືບຕໍ່ໄດ້ຮັບການເອົາໃຈໃສ່ຕາມເງື່ອນໄຂ ແລະ ຄວາມສາມາດທາງດ້ານງົບປະມານ ແລະ ມີຜົນສຳເລັດດີຢູ່ຫຼາຍບໍລິເວນ

5

ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໄດ້ຮັບການປັບປຸງ ແລະ ສ້າງຂຶ້ນຫຼາຍສະບັບ; ການປັບປຸງກົງຈັກການຈັດຕັ້ງ, ການຄຸ້ມຄອງລັດ-ສັງຄົມດ້ວຍກົດໝາຍ ນັບມື້ໄດ້ຮັບການປັບປຸງ ແລະ ມີການຫັນປ່ຽນທີ່ຕັ້ງໜ້າຂຶ້ນ

6

ການພົວພັນຮ່ວມມືກັບຕ່າງປະເທດສືບຕໍ່ດຳເນີນເປັນປົກກະຕິ ດ້ວຍຮູບການ ແລະ ວິທີການທີ່ສອດຄ່ອງກັບການຜັນແປຂອງສະພາບການໃນແຕ່ລະໄລຍະ ແລະ ນຳຜົນປະໂຫຍດມາໃຫ້ປະເທດຊາດໃນທຸກສະຖານະການ

# ຈຸດອ່ອນ, ຂໍ້ຄົງຄ້າງ

| | |
|---|---|
| 1 | ການເຕີບໂຕເສດຖະກິດຍັງບໍ່ທັນມີຄຸນນະພາບສູງ, ການປະຕິບັດວາລະແຫ່ງຊາດດ້ານເສດຖະກິດ-ການເງິນຄືບໜ້າຊ້າ, ອັດຕາເງິນເຟີ້, ອັດຕາແລກປ່ຽນ, ລາຄາຂອງຊົມໃຊ້ ເໜັງຕີງແຮງກະທົບການປະຕິບັດຄາດໝາຍ, ການລົງທຶນຂອງພາກເອກະຊົນຈຳນວນໜຶ່ງຍັງບໍ່ທັນສາມາດຄຸ້ມຄອງໄດ້ດີ |
| 2 | ການຜະລິດສິນຄ້າ ແລະ ການບໍລິການ ເພື່ອທົດແທນການນຳເຂົ້າຍັງບໍ່ທັນແຂງແຮງ, ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງບໍ່ທັນແຂງແຮງ ແລະ ບໍ່ສາມາດແຂ່ງຂັນກັບພາຍນອກ, ການປະຕິຮູບລັດວິສາຫະກິດ ຍັງມີຄວາມຊັກຊ້າ |
| 3 | ການຂຸດຄົ້ນ ແລະ ນຳໃຊ້ທຳແຮ່ທາງດ້ານຊັບພະຍາກອນທຳມະຊາດ ມີລັກສະນະຟ້າວຟັ່ງ ແລະ ບໍ່ປະຕິບັດຕາມຫຼັກວິທະຍາສາດ ຈຶ່ງເຮັດໃຫ້ການປະຕິບັດໂຄງການຂຸດຄົ້ນແຮ່ທາດຈຳນວນໜຶ່ງມີປະສິດທິຜົນຕ່ຳ, ບໍ່ສາມາດນຳລາຍໄດ້ມາໃຫ້ລັດຖະບານ, ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ບໍ່ທັນຮັບປະກັນຕາມ 3 ຫຼັກການ (ເດັດຂາດ, ໂປ່ງໃສ, ເປັນມືອາຊີບ) |
| 4 | ການພັດທະນາຂົງເຂດສັງຄົມ ແລະ ການແກ້ໄຂຄວາມທຸກຍາກ, ເຖິງວ່າໄດ້ມີຄວາມພະຍາຍາມ ແຕ່ຕົວຊີ້ບອກຈຳນວນໜຶ່ງຍັງບໍ່ທັນຮັບປະກັນທັງທາງດ້ານປະລິມານ ແລະ ຄຸນນະພາບ ແລະ ຍັງບໍ່ບັນລຸຄາດໝາຍທີ່ສະພາແຫ່ງຊາດຮັບຮອງ, |
| 5 | ລະບອບ, ລະບຽບ ແລະ ກົນໄກການຄຸ້ມຄອງ ໃນການບໍລິຫານງານລັດ ບາງດ້ານບໍ່ທັນສາມາດຕອບສະໜອງໄດ້ຄວາມຕ້ອງການຂອງວຽກງານໃນເງື່ອນໄຂໃໝ່; ກົດໝາຍທີ່ວາງອອກໃນບາງມາດຕາຍັງບໍ່ທັນສອດຄ່ອງກັບສະພາບການໃໝ ທັງມີອັນຂັດກັນ; ການຫັນເປັນທັນສະໄໝຍັງຊັກຊ້າ ແລະ ບໍ່ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ |
| 6 | ການແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມເປັນຕົ້ນ ຢາເສບຕິດ, ຂີ້ລັກງັດແງະ, ການຄ້າຂາຍເຖື່ອນ ແລະ ອື່ນໆ, ເຖິງວ່າໄດ້ມີຄວາມພະຍາຍາມ ແຕ່ຍັງເກີດຂຶ້ນໃນທຸກທ້ອງຖິ່ນໃນລະດັບແຕກຕ່າງກັນ ອັນໄດ້ສ້າງຄວາມຫຍຸ້ງຍາກໃຫ້ແກ່ສັງຄົມ. |
| 7 | ການພົວພັນຮ່ວມມືກັບຕ່າງປະເທດ ເຖິງວ່າໄດ້ມີຄວາມພະຍາຍາມ ແຕ່ຄວາມເປັນເຈົ້າການໃນດ້ານທີ່ໄດ້ຕົກລົງກັບສາກົນ ແລະ ປະເທດເພື່ອນມິດຕ່າງໆ ຂອງພວກເຮົາຍັງບໍ່ທັນສູງ ແລະ ມີຫຼາຍກໍລະນີແມ່ນດຳເນີນມີລັກສະນະຫຼີບໄປຫຼີບມາ ແລະ ແກ່ຍາວ |

# ບົດຮຽນທີ່ຖອດຖອນໄດ້

1

ການຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມຕິດພັນກັບ
ການຮັກສາຄວາມໝັ້ນທ່ຽງຂອງເສດຖະກິດມະຫາພາກ
ບົນພື້ນຖານການເສີມຂະຫຍາຍມູນເຊື້ອຄວາມສາມັກຄີອັນເປັນປຶກແຜ່ນຂອງປະຊາຊົນບັນດາເຜົ່າ
ພາຍໃຕ້ການນຳພາຂອງພັກ ແມ່ນເງື່ອນໄຂພື້ນຖານ ແລະ ສຳຄັນ ສຳລັບຜົນສຳເລັດການພັດທະນາ

2

ການພັດທະນາເສດຖະກິດ-ສັງຄົມ ທີ່ມີຂໍ້ມູນສະຖິຕິທີ່ຖືກຕ້ອງ, ຊັດເຈນ, ສອດຄ່ອງກັບ ທ່າແຮງບົ່ມຊ້ອນ,
ມີການປະສານງານກັນທີ່ກົມກຽວ ແລະ ເອກະພາບກັນແຕ່ຫົວທີ ຂອງພາກລັດ,
ມີການຈັດຕັ້ງກຸ່ມການຜະລິດທີ່ເຂັ້ມແຂງ ແມ່ນ ເປັນກຳລັງແຮງສຳຄັນເຮັດໃຫ້ການພັດທະນາເສດຖະກິດ-
ສັງຄົມ ມີການຂະຫຍາຍຕົວຕໍ່ເນື່ອງ, ມີຄວາມໝັ້ນທ່ຽງ ແລະ ຍືນຍົງ

3

ການພັດທະນາຊັບພະຍາກອນມະນຸດ ໃຫ້ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສິນທຳປະຕິວັດ
ແມ່ນກຸນແຈທີ່ສຳຄັນ ຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຕ່ລະໄລຍະ

4

ການສ້າງ ແລະ ປັບປຸງກົດໝາຍລະບຽບການໃຫ້ທັນການ, ຮັດກຸມ, ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ
ຂອງການພັດທະນາແຕ່ລະໄລຍະ, ທັງມີການຄຸ້ມຄອງບໍລິຫານລັດຕາມລະບຽບກົດໝາຍຢ່າງເຂັ້ມງວດ, ໂປ່ງໃສ
ປະຕິບັດຕາມທິດ **"ເຮັດແທ້ທຳຈິງ ແລະ ບຸກທະລຸ "** ແມ່ນປັດໄຈສຳຄັນເພື່ອບັນລຸຄວາມຍຸຕິທຳໃນສັງຄົມ
ແລະ ປະສິດທິຜົນໃນການບໍລິຫານຂອງລັດ

5

ການຮັບປະກັນຄວາມສອດຄ່ອງກົມກຽວລະຫວ່າງແຜນພັດທະນາກັບຍຸດທະສາດ, ວິໄສທັດຮອດປີ 2030
ແລະ ເປົ້າໝາຍການພັດທະນາແບບຍືນຍົງ ແມ່ນໃຈກາງ ແລະ ເປັນຫຼັກການຂອງການພັດທະນາແບບຕໍ່ເນື່ອງ;
ມີການຕິດຕາມ, ກວດກາ ແລະ ການປະເມີນຜົນຂອງການຈັດຕັ້ງປະຕິບັດບັນດາທິດທາງ, ຄາດໝາຍສູ້ຊົນ
ແຕ່ລະຂົງເຂດ ແມ່ນມາດຕະການທີ່ຈຳເປັນ ແລະ ສຳຄັນ

# ພາກທີ 2
# ທິດທາງແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030)

# ຄວາມສໍາຄັນຂອງແຜນການ 5 ປີ ຄັ້ງທີ X

- ຜັນຂະຫຍາຍ ວິໄສທັດ ຮອດປີ 2030
- ຍຸດທະສາດຂ້າມຜ່ານ ຂອງລາວ ເພື່ອອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2026 ແລະ ຫຼັງປີ 2026
- ຍຸດທະສາດການເຕີບໂຕສີຂຽວ
- ເປົ້າໝາຍການພັດທະນາແບບຍືນຍົງ (SDGs)

- ສືບຕໍ່ແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ກໍຄື ມະຕິ 04/ກມສພ
- ມະຕິ ກອງປະຊຸມໃຫຍ່ທົ່ວປະເທດ ຄັ້ງທີ XII ຂອງພັກ
- ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ຮອດປີ 2035 ແລະ ວິໄສທັດຮອດປີ 2045

# ຄວາມສຳຄັນຂອງແຜນການ 5 ປີ ຄັ້ງທີ X

## ຈຸດປະສົງ ແລະ ເປົ້າໝາຍ

- ເພື່ອສືບຕໍ່ການຈັດຕັ້ງປະຕິບັດຜັນຂະຫຍາຍ ບັນດາວຽກງານ, ຈຸດອ່ອນ, ຂໍ້ຄົງຄ້າງ ແລະ ອຸປະສັກຕ່າງໆ ທີ່ຍັງບໍ່ທັນສຳເລັດໃນ ການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ 9 ຜ່ານມາ, ລວມທັງການແກ້ໄຂບັນຫາຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ໂຄງລ່າງພື້ນຖານ, ການພັດທະນາຊັບພະຍາກອນມະນຸດ ໂດຍສະເພາະ ການປະລະການຮຽນ, ການຂາດແຮງງານ ແລະ ອື່ນໆ.
- ເພື່ອເສີມຂະຫຍາຍທ່າແຮງບົ່ມຊ້ອນຂອງຊາດໃນການສ້າງຖານການຜະລິດ ແລະ ການບໍລິການທີ່ເປັນປາຍແຫລມ ເພື່ອໃຫ້ກາຍເປັນພື້ນຖານການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ເທື່ອລະກ້າວ, ເຮັດໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ພັດທະນາປະເທດຊາດໃຫ້ຫລຸດພົ້ນອອກຈາກປະເທດດ້ອຍພັດທະນາ ຕາມທິດສີຂຽວ ແລະ ຍືນຍົງ.
- ເພີ່ມທະວີຄວາມໝັ້ນຄົງ ທາງດ້ານການເມືອງ ແລະ ຄວາມສາມັກຄີປອງດອງໃນສັງຄົມຢ່າງໜັກແໜ້ນ.

# ຄຳຂວັນ

"ຕັ້ງໜ້າສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ,
ນຳໃຊ້ທຸກທ່າແຮງຢ່າງມີປະສິດທິຜົນ,
ພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວ ແລະ
ຍືນຍົງ"

# ທິດທາງລວມ

ຍົກສູງລະດັບຄຸນນະພາບຊີວິດຂອງປະຊາຊົນໃຫ້ສູງຂຶ້ນ, ຮັບປະກັນສະຖຽນລະພາບການເມືອງ ຢ່າງໜັກ ແໜ້ນ, ສັງຄົມມີຄວາມສະຫງົບສຸກ, ມີຄວາມເປັນສາມັກຄີເປັນປຶກແຜ່ນ ແລະ ພັດທະນາປະເທດຊາດໃຫ້ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ.

ຍຸ້ງຍາກດ້ານເສດຖະກິດ-ການເງິນ ຢ່າງເປັນຮູບປະທຳຫຼາຍຂຶ້ນ, ບໍ່ສ້າງໜີ້ສິນໜັກໜ່ວງ; ດຳເນີນການຄຸ້ມຄອງ-ບໍລິຫານເສດຖະກິດ ຕາມກົນໄກຕະຫຼາດ ທີ່ມີການການດັດສົມ ແລະ ຄຸ້ມຄອງຂອງລັດ ເພື່ອພັດທະນາເສດຖະກິດໃຫ້ຂະຫຍາ

ເອົາໃຈໃສ່ພັດທະນາເສດຖະກິດ, ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ ຢ່າງສົມສ່ວນ ຕາມທິດສີຂຽວ ແລະ ຍືນຍົງ.

ສຸມໃສ່ກໍ່ສ້າງ ແລະ ພັດທະນາຊັບພະຍາກອນມະນຸດ, ຖັນແຖວນັກຮຽນຮູ້-ປັນຍາຊົນ ໃຫ້ສາມາດຕອບສະໜອງໃຫ້ແກ່ການສ້າງສາປະເທດໃນເງື່ອນໄຂໃໝ່, ສາມາດປະກອບສ່ວນເຂົ້າໃນການຄົ້ນຄ້ວາ, ການປະດິດສ້າງໃໝ່ໃຫ້ແກ່ປະເທດຊາດ ນັບມື້ນັບຫຼາຍ ແລະ ໂດດເດັ່ນຂຶ້ນ.

ຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຕາມທິດສ້າງລັດທີ່ປົກຄອງດ້ວຍກົດໝາຍ.

ເຄື່ອນໄຫວວຽກງານການຕ່າງປະເທດຢ່າງເປັນເຈົ້າການ ແລະ ຫ້າວຫັນ, ໄດ້ຮັບຄວາມເຊື່ອໝັ້ນ, ໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫຼືອຈາກເພື່ອນມິດ, ມີບົດບາດພົ້ນເດັ່ນສູງຂຶ້ນ ໃນເວທີພາກພື້ນ ແລະ ສາກົນ.

# 6 ເປົ້າໝາຍໃຫຍ່ຂອງແຜນການ 5 ປີ ຄັ້ງທີ X

**ເປົ້າໝາຍ 1:** ສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ດ້ວຍການນຳໃຊ້ທ່າແຮງເພື່ອເຮັດໃຫ້ເສດຖະກິດມີສະຖຽນລະພາບ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ

**ເປົ້າໝາຍ 2:** ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ ແລະ ສາມາດຮູ້ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ

**ເປົ້າໝາຍ 3:** ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ການພັດທະນາສັງຄົມໃຫ້ມີການຂະຫຍາຍຕົວ ແລະ ມີຄຸນນະພພາບສູງຂຶ້ນ

**ເປົ້າໝາຍ 4:** ປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃຫ້ມີຄວາມຍືນຍົງ ແລະ ແລະ ສາມາດກຽມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຕ່າງໆ

**ເປົ້າໝາຍ 5:** ການເຊື່ອມໂຍງ-ເຊື່ອມຈອດພາກພື້ນ ແລະ ສາກົນຢ່າງກວ້າງຂວາງ ແລະ ມີປະສິດທິຜົນ

**ເປົ້າໝາຍ 6:** ການຄຸ້ມຄອງ-ບໍລິຫານລັດໃຫ້ມີປະສິດທິພາບ, ການເມືອງມີສະຖຽນລະພາບ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ຍຸຕິທຳ ແລະ ສີວິໄລ

# ບາງຄາດໝາຍ ແລະ ຕົວຊີ້ບອກ ຂອງແຜນ 5 ປີຄັ້ງທີ X

1. ສູ້ຊົນເຮັດໃຫ້ລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວສະເລ່ຍ ໃນລະດັບ 5% ຂຶ້ນໄປ ຕໍ່ປີ
2. ສູ້ຊົນການສົ່ງອອກສິນຄ້າກະສິກຳ ແລະ ປ່າໄມ້ ໃຫ້ໄດ້ 9 ຕື້ໂດລາສະຫາລັດ, ດຶງດູດນັກທ່ອງທ່ຽວຕ່າງປະເທດຮອດປີ 2030 ໃຫ້ໄດ້ 6,21 ລ້ານເທື່ອຄົນ, ຜະລິດກະແສໄຟຟ້າ ໃຫ້ໄດ້ 302,511 ລ້ານກິໂລວັດໂມງ ແລະ ມູນຄ່າຜະລິດແຮ່ທາດ ໃຫ້ໄດ້ 12.226 ລ້ານໂດລາສະຫະລັດ
3. ລາຍຮັບງົບປະມານ ເທົ່າກັບ 20% ຂອງ GDP ຂຶ້ນໄປ (ມະຕິ 04)
4. ສູ້ຊົນໃຫ້ອັດຕາເງິນເຟີ້ຫຼຸດລົງຢ່າງຕໍ່ເນື່ອງ ໃນລະດັບໜຶ່ງຕົວເລກ
5. ຄວາມຕ້ອງການທຶນເພື່ອການພັດທະນາ 5 ປີ ຈຳນວນ 523,504 ຕື້ກີບ ເທົ່າກັບ 20,2% ຂອງ GDP
6. ອັດຕາປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ບໍ່ໃຫ້ເກີນ 9.5%;
7. ອັດຕາການຕາຍຂອງເດັກນ້ອຍລຸ່ມ 05 ປີ ໃຫ້ຕໍ່າກວ່າ 25/1,000 ຄົນເດັກນ້ອຍເກີດມີຊີວິດ;
8. ພັດທະນາສີມືແຮງງານ ແລະ ຫົວໜ່ວຍແຮງງານ ໃຫ້ໄດ້ 650,000 ຄົນ;
9. ສູ້ຊົນສ້າງຄອບຄົວພົ້ນທຸກໃຫ້ໄດ້ຫຼາຍກວ່າ 100,000 ຄອບຄົວ;
10. ສູ້ຊົນເຮັດໃຫ້ເນື້ອທີ່ປົກຫຸ້ມປ່າໄມ້ ບັນລຸ 70% ຂອງເນື້ອທີ່ດິນທົ່ວປະເທດ;
11. ຂຶ້ນທະບຽນອອກໃບຕາດິນ ໃຫ້ໄດ້ຈຳນວນ 680,000 ຕອນ;
12. ສູ້ຊົນມູນຄ່າການສົ່ງອອກສິນຄ້າທີ່ຜະລິດໃນເຂດເສດຖະກິດພິເສດ ໃຫ້ໄດ້ 5 ຕື້ໂດລາສະຫະລັດ (ສະເລ່ຍເພີ່ມຂຶ້ນ 15% ຕໍ່ປີ).
13. ສູ້ຊົນສ້າງແຂວງເປັນຫົວໜ່ວຍຍຸດທະສາດໃຫ້ໄດ້ 3 ແຂວງ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານໃຫ້ໄດ້ 18 ເມືອງ ແລະ ສ້າງຕັ້ງຕາແສງ ໃຫ້ໄດ້ 600 ຕາແສງ;

## ເປົ້າໝາຍ 1. ສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ດ້ວຍການນຳໃຊ້ທ່າແຮງເພື່ອເຮັດໃຫ້ເສດຖະກິດມີສະຖຽນລະພາບ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ

### 6 ແຜນວຽກຈຸດສຸມ

1. ນຳໃຊ້ທ່າແຮງ ເພື່ອຍູ້ແຮງເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄວາມເຂັ້ມແຂງ ແລະ ມີຄຸນນະພາບສູງຂຶ້ນ
2. ເສດຖະກິດມະຫາພາກມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ
3. ຍົກສູງປະສິດທິພາບການລົງທຶນ ໃຫ້ມີຄຸນນະພາບ ແລະ ມີປະສິດທິຜົນສູງ
4. ພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໄປສູ່ຄຸນນະພາບໃໝ່ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ
5. ພັດທະນາລັດວິສາຫະກິດ ແລະ ເສດຖະກິດລວມໝູ່ຂອງປະຊາຊົນ ໃຫ້ມີຄຸນນະພາບ ແລະ ມີຄວາມເຂັ້ມແຂງ
6. ພັດທະນາເສດຖະກິດດິຈິຕອນໃຫ້ມີຄວາມເຂັ້ມແຂງ ເພື່ອຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີການຂະຫຍາຍຕົວທີ່ຍືນຍົງ

### ສຸມໃສ່ພັດທະນາ 7 ທ່າແຮງ

1. ຂະແໜງພະລັງງານໄຟຟ້າ ແລະ ນ້ຳມັນເຊື້ອໄຟ
2. ຂະແໜງກະສິກຳ ແລະ ປຸງແຕ່ງກະສິກຳ
3. ຂະແໜງຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ
4. ຂະແໜງບໍລິການຂົນສົ່ງ ແລະ ໂລຈິດຕິກ
5. ຂະແໜງບໍລິການທ່ອງທ່ຽວ
6. ຂະແໜງອຸດສາຫະກຳປຸງແຕ່ງທີ່ເປັນຕ່ອງໂສ້ຖານການຜະລິດພາກພື້ນ
7. ຂະແໜງເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານຮັບໃຊ້ເສດຖະກິດດິຈິຕອນ

## ເປົ້າໝາຍ 2. ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ ແລະ ສາມາດຮູ້ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ

### 4 ແຜນວຽກຈຸດສຸມ

1. ພັດທະນາການສຶກສາໃຫ້ມີຄຸນນະພາບ ເພື່ອຮອງຮັບການພັດທະນາຂອງປະເທດຊາດ
2. ປັບປຸງຄຸນນະພາບວຽກງານສາທາລະນະສຸກ ແລະ ການບໍລິການດ້ານສາທາລະນະສຸກ ໃຫ້ມີຄຸນນະພາບ ແລະ ທົ່ວເຖິງ
3. ພັດທະນາສີມືແຮງງານໃຫ້ໄດ້ປະລິມານ ແລະ ຄຸນນະພາບ ເພື່ອຕອບສະໜອງຄວາມຕ້ອງການພັດທະນາ
4. ບຸກຄະລາກອນຂອງພາກລັດໄດ້ຮັບການພັດທະນາ ແລະ ມີຄຸນນະພາບສູງຂຶ້ນ

## ເປົ້າໝາຍ 3. ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ການພັດທະນາສັງຄົມໃຫ້ມີການຂະຫຍາຍຕົວ ແລະ ມີຄຸນນະພພາບສູງຂຶ້ນ

### 6 ແຜນວຽກຈຸດສຸມ

1. ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ມີຄຸນນະພາບດີຂຶ້ນ
2. ປັບປຸງວຽກງານຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ໃຫ້ທົ່ວເຖິງ ແລະ ມີຄຸນນະພາບສູງຂຶ້ນ
3. ສົ່ງເສີມ ແລະ ພັດທະນາໄວໜຸ່ມ, ແມ່ຍິງ, ເດັກ ແລະ ຄວາມສະເໝີພາບຍິງ-ຊາຍ ໃຫ້ມີຄຸນນະພາບດີຂຶ້ນ
4. ພັດທະນາວຽກງານຖະແຫຼງຂ່າວໃຫ້ທັນສະໄໝ ແລະ ວ່ອງໄວ, ສົ່ງເສີມວັດທະນະທຳ ທີ່ເປັນເອກະລັກຂອງຊາດ, ກ້າວໜ້າ ແລະ ສ້າງໃຫ້ສັງຄົມມີຄວາມສາມັກຄີເປັນປຶກແຜ່ນ ແລະ ສີວິໄລ
5. ປັບປຸງລະບົບປະກັນສັງຄົມ-ປົກປ້ອງສັງຄົມໃຫ້ກວ້າງຂວາງ ແລະ ມີຄຸນນະພາບ
6. ແກ້ໄຂບັນຫາລະເບີດບໍ່ທັນແຕກ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກ ໃຫ້ດີຂຶ້ນເທື່ອລະກ້າວ

## ເປົ້າໝາຍ 4. ປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃຫ້ມີຄວາມຍືນຍົງ ແລະ ສາມາດກຽມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຕ່າງໆ

### 3 ແຜນວຽກຈຸດສຸມ

1. ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດປ່າໄມ້, ທີ່ດິນ, ນ້ຳ ແລະ ແຮ່ທາດ ຢ່າງມີແຜນການ, ປະຢັດ, ໃຫ້ເກີດຜົນປະໂຫຍດສູງສຸດ ແລະ ມີຄວາມຍືນຍົງ
2. ສົ່ງເສີມວຽກງານການເຕີບໂຕສີຂຽວ ແລະ ວຽກງານການແກ້ໄຂບັນຫາປ່ຽນແປງດິນຟ້າອາກາດ ເພື່ອຫຼຸດຜ່ອນ ແລະ ເພີ່ມການດູດຊັບທາດອາຍເຮືອນແກ້ວ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ກວ້າງຂວາງ
3. ເພີ່ມທະວີການປ້ອງກັນ, ການຄວບຄຸມ ແລະ ການຟື້ນຟູຫຼັງໄພພິບັດຕ່າງໆ.

## ເປົ້າໝາຍ 5. ການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນຢ່າງກວ້າງຂວາງ ແລະ ມີປະສິດທິຜົນ

### 4 ແຜນວຽກຈຸດສຸມ

1. ພັດທະນາໂຄງລ່າງພື້ນຖານທີ່ສາມາດເຊື່ອມຈອດ-ເຊື່ອມໂຍງພາຍໃນ, ພາກພື້ນ ແລະ ສາກົນ ເພື່ອເອື້ອອຳນວຍໃຫ້ແກ່ການຜະລິດ, ການບໍລິການ, ການຄ້າ ແລະ ການລົງທຶນ
2. ເສີມຂະຫຍາຍການພົວພັນຮ່ວມມື, ການເຊື່ອມໂຍງການຄ້າ ແລະ ການລົງທຶນກັບພາກພື້ນ ແລະ ສາກົນ ຢ່າງຕັ້ງໜ້າ ແລະ ກວ້າງຂວາງຂຶ້ນກວ່າເກົ່າ
3. ພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນ ໃຫ້ມີຄວາມສົມດຸນ, ເຂັ້ມແຂງ ແລະ ສອດຄ່ອງກັບທ່າແຮງບົ່ມຊ້ອນ
4. ການພັດທະນາຕົວເມືອງ ແລະ ເຂດເສດຖະກິດພິເສດ ໃຫ້ກາຍເປັນຖານການຜະລິດ, ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ ເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນ

## ເປົ້າໝາຍ 6. ການຄຸ້ມຄອງ ແລະ ບໍລິຫານລັດໃຫ້ມີປະສິດທິພາບ, ການເມືອງມີສະຖຽນລະພາບ ແລະ ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ

### 3 ແຜນວຽກຈຸດສຸມ

1. ຍົກສູງປະສິດທິພາບການປົກຄອງ-ການຄຸ້ມຄອງບໍລິຫານລັດໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ເຂັ້ມງວດຕາມກົດໝາຍ ແລະ ວຽກງານ 3 ສ້າງ ໃຫ້ເຂົ້າສູ່ລວງເລິກ ແລະ ປະຕິບັດຕົວຈິງຢ່າງມີປະສິດທິຜົນສູງ
2. ປັບປຸງກົນໄກ, ລະບຽບການປະສານງານລະຫວ່າງພາກລັດດ້ວຍກັນໃຫ້ມີຄວາມເປັນເອກະພາບ ແລະ ວ່ອງໄວຂຶ້ນ
3. ຮັບປະກັນໃຫ້ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ

# ພາກທີ 3
# ມາດຕະການ, ນະໂຍບາຍ ແລະ ກົນໄກການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ X

# ມາດຕະການ ແລະ ນະໂຍບາຍ

1. ຊຸກຍູ້ ແລະ ສົ່ງເສີມການລົງທຶນໃນຂະແໜງການທີ່ເປັນທ່າແຮງຂອງຊາດ ແລະ ຂອງທ້ອງຖິ່ນ ຢ່າງມີຈຸດສຸມ ແລະ ມີປະສິດທິຜົນສູງ ດ້ວຍນະໂຍບາຍທີ່ເໝາະສົມຕາມກົດໝາຍ ແລະ ລະບຽບການກຳນົດ, ສົ່ງເສີມການນຳໃຊ້ຜະລິດຕະພັນລາວ ແລະ ການສົ່ງອອກ ເພື່ອຫຼຸດຜ່ອນລະດັບການຂາດດຸນກັບຕ່າງປະເທດ.

2. ດຳເນີນການປະຕິຮູບການຄຸ້ມຄອງການເງິນ-ງົບປະມານຂອງລັດ ດ້ວຍເຄື່ອງມືທັນສະໄໝ, ການປະຕິບັດກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ, ຊຸກຍູ້ບັນດາຫົວໜ່ວຍທຸລະກິດນຳໃຊ້ລະບົບບັນຊີຢ່າງເປັນເອກະພາບ; ຄົ້ນຄວ້າຖານລາຍຮັບ ໃໝ່ບາງປະເພດ ເຊັ່ນ: ອາ ກອນຊັບສິນຢູ່ເຂດຕົວເມືອງໃຫຍ່, ອາກອນສິ່ງແວດລ້ອມ ແລະ ອື່ນໆ. ພ້ອມກັນນີ້, ຂະຫຍາຍຖານລາຍຮັບດ້ວຍການສົ່ງເສີມໃຫ້ SME ເປັນຜູ້ຂັບເຄື່ອນ ແນໃສ່ຊຸກຍູ້ສົ່ງເສີມໃຫ້ບັນດາຜູ້ປະກອບການ ແລະ ຫົວໜ່ວຍທຸລະກິດເຂົ້າມາມີສ່ວນຮ່ວມເສດຖະກິດໃນລະບົບຫຼາຍຂຶ້ນ;

3. ເພີ່ມທະວີທຶນເຂົ້າໃນວຽກງານພັດທະນາຊັບພະຍາກອນມະນຸດ ນັບຕັ້ງແຕ່ການສຶກສາກ່ອນໄວຮຽນ ຈົນໄປຮອດການສຶກສາຂັ້ນມະຫາວິທະຍາໄລ, ວິຊາຊີບ, ອາຊີວະສຶກສາ ແນ່ໃສ່ການສ້າງຄຸນນະພາບຂອງການຮຽນການສອນ, ປັບປຸງຫຼັກສູດໃຫ້ມີຄວາມແທດເໝາະໂດຍສະເພາະການກະກຽມຊັບພະຍາກອນມະນຸດ ໃຫ້ສາມາດແຂ່ງຂັນໄດ້ໃນຍຸກອຸດສະຫະກຳ 4.0 ແລະ ຍຸກຂອງການພັດທະນາດີຈີຕອນ.

4. ວາງແຜນການນຳໃຊ້ທ່າແຮງຈາກຊັບພະຍາກອນໜຸ່ມນ້ອຍ ດ້ວຍການຄົ້ນຄວ້າ ແລະ ວິໄຈກ່ຽວກັບຂະແໜງທີ່ເປັນບູລິມະສິດ ເພື່ອສຸມການລົງທຶນໃສ່ຂະແໜງນັ້ນ ເປັນຕົ້ນ ຫຼັກສູດທີ່ສົ່ງເສີມໃຫ້ນັກຮຽນມີທັກສະໃນການແກ້ໄຂບັນຫາ, ທັກສະໃນການເປັນຜູ້ນຳ, ທັກສະໃນການບໍລິຫານເວລາ

# ມາດຕະການ ແລະ ນະໂຍບາຍ (ຕໍ່)

5. ປູກຈິດສຳນຶກໃຫ້ທຸກຄົນ ປົກປັກສິ່ງແວດລ້ອມ ແລະ ນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ. ເພີ່ມທະວີບົດບາດການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ປະຕິບັດກົນໄກ, ນິຕິກຳ ຢ່າງມີປະສິດຕິພາບ, ປະກອບສ່ວນຊຸກຍູ້ການພັດທະນາແບບຍືນຍົງ ແລະ ຕາມທິດສີຂຽວ
6. ກໍ່ສ້າງຕາໜ່າງເສັ້ນທາງແຫ່ງຊາດ, ທາງລົດໄຟ, ທາງນໍ້າ ແລະ ທາງອາກາດໃຫ້ມີຫຼາຍເສັ້ນຫຼາຍສາຍ ແລະ ມີຄຸນນະພາບ ເພື່ອສົ່ງເສີມການເຊື່ອມຈອດກັບຕະຫຼາດພາກພື້ນ ທີ່ມີຜົນຜະລິດ ແລະ ຕະຫຼາດຂະໜາດໃຫຍ່
7. ຍົກສູງຄວາມຮັບຜິດຊອບທາງດ້ານການເມືອງທຸກຂັ້ນ ໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງຕົນ. ພ້ອມທັງ ເຂັ້ມງວດການກວດກາ ແລະປະຕິບັດກົດໝາຍໃຫ້ມີຄວາມເຂັ້ມແຂງ. ຕ້ານ ແລະ ແກ້ໄຂການສໍ້ລາດບັງຫຼວງໃນທຸກລະດັບ.

# ກົນໄກຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ X (2026-2030)

1. ບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ຜັນຂະຫຍາຍ 6 ເປົ້າໝາຍໃຫຍ່ ໃຫ້ເປັນແຜນການ, ງານ ແລະ ໂຄງການຕົນ.
2. ການຈັດຕັ້ງປະຕິບັດຮຽກຮ້ອງໃຫ້ມີເປົ້າໝາຍສະເພາະ, ຄາດໝາຍ, ແລະ ວຽກຈຸດສຸມ, ຄຽງຄູ່ກັບແຜນການ ແລະ ໂຄງການລະອຽດ ຊຶ່ງຕ້ອງໄດ້ສຸມໃສ່ການໝູນໃຊ້ກຳລັງແຮງ ແລະ ຊຸກຍູ້ບັນດານະໂຍບາຍແນໃສ່ຍົກສູງພື້ນຖານໂຄງລ່າງເສດຖະກິດ ແລະ ສັງຄົມ.
3. ລັດຖະບານຈະອອກດຳລັດວ່າດ້ວຍການຈັດຕັ້ງປະຕິບັດ ແລະ ກະຊວງແຜນການ ແລະ ການລົງທຶນອອກຄຳແນະນຳດ້ານວິຊາການ, ໂດຍສຸມໃສ່ການປະສານສົມທົບກັບຂະແໜງການສູນກາງ ແລະ ທ້ອງຖິ່ນໃຫ້ມີປະສິດທິຜົນ.
4. ມີການແບ່ງຄວາມຮັບຜິດຊອບຂອງບັນດາຂະແໜງການ ແລະ ທ້ອງຖິ່ນ, ບັນດາກະຊວງ ແລະ ຄູ່ຮ່ວມພັດທະນາ.

# ຂອບໃຈ